ດ່ວນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ກົມຈັດຕັ້ງ

ເລກທີ 01 /ຈຕ

ນະຄອນຫຼວງວຽງຈັນ, ວັນທີ 6. ມັງກອນ 2026

# ແຈ້ງການ

**ຮຽນ:** ບັນດາສະຫາຍ ຄະນະພັກມະຫາວິທະຍາໄລແຫ່ງຊາດ, ຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານ ທີ່ຂຶ້ນກັບອົງຄະນະພັກ ກະຊວງສຶກສາທິການ ແລະ ກິລາ ທີ່ນັບຖື.

**ເລື່ອງ:** ເພີ່ມທະວີໃຫ້ເອົາໃຈໃສ່ຈັດຕັ້ງໜ່ວຍປະຈຳການປ້ອງກັນທີ່ຕັ້ງສຳນັກງານຫ້ອງການຂອງຕົນ ເພື່ອຮັບປະກັນຄວາມສະຫງົບ ໃຫ້ແກ່ກອງປະຊຸມຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ.

- ອີງຕາມ ໜັງສືແຈ້ງການ ຂອງກົມໃຫຍ່ສັນຕິບານ (502) ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 5477/ສບ, ລົງວັນທີ 26 ພະຈິກ 2025 ວ່າດ້ວຍເພີ່ມທະວີຄວາມເອົາໃຈໃສ່ຊີ້ນຳ ແລະ ຊຸກຍູ້ວຽກງານປ້ອງກັນເວນຍາມ , ຈັດຕັ້ງໜ່ວຍປະຈຳການ ຢູ່ສຳນັກງານ-ອົງການ ອ້ອມຂ້າງສູນກາງ ແລະ ໃນໄລຍະວັນສຳຄັນຕ່າງໆ ຂອງຊາດ ທີ່ຈະມາເຖິງໃນມໍ່ໆ ນີ້;
- ອີງຕາມ ມະຕິຕົກລົງຂອງຄະນະປະຈຳພັກ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 306/ຄພສກ, ລົງວັນທີ 17 ກັນຍາ 2021 ວ່າດ້ວຍການແຕ່ງຕັ້ງຄະນະປ້ອງກັນພາຍໃນເຄື່ອນໄຫວວຽກງານ ປກຊ-ປກສ ກະຊວງສຶກສາທິການ ແລະ ກິລາ;

ເພື່ອຈັດຕັ້ງຜັນຂະຫຍາຍໜັງສືແຈ້ງການ ຂອງກົມໃຫຍ່ສັນຕິບານ (502) ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 5477/ສບ, ລົງວັນທີ 26 ພະຈິກ 2025 ສະນັ້ນ, ກົມຈັດຕັ້ງ ກະຊວງສຶກສາທິການ ແລະ ກິລາ ຈຶ່ງອອກແຈ້ງການເພີ່ມເຕີມ ປ້ອງກັນເວນຍາມ ເພື່ອຮັບປະປະກັນຄວາມສະຫງົບ 100 % ໃຫ້ເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ 05-09 ມັງກອນ 2026 ດັ່ງລາຍລະອຽດລຸ່ມນີ້:

1. ໃຫ້ຄະນະພັກມະຫາວິທະຍາໄລແຫ່ງຊາດ, ຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານ ທີ່ຂຶ້ນກັບອົງຄະນະພັກ ກະຊວງສຶກສາທິການ ແລະ ກິລາ ເອົາໃຈໃສ່ສືບຕໍ່ ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ ພະນັກງານ, ສະມາຊິກພັກ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ໃຫ້ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍພາຍໃນ-ພາຍນອກ, ຢ່າງໜັກແໜ້ນ, ເຂັ້ມແຂງ ທາງດ້ານການເມືອງ-ແນວຄິດ ເພື່ອຮັບປະກັນຄວາມສະຫງົບ ໃຫ້ແກ່ກອງປະຊຸມຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ
2. ໃຫ້ເອົາໃຈໃສ່ສືບຕໍ່ຕິດຕາມການເຄື່ອນໄຫວ ຂອງພະນັກງານ, ສະມາຊິກພັກ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ເພື່ອຮັບປະກັນການເຄື່ອນໄຫວບໍ່ໃຫ້ລະເມີດກົດລະບຽບຂອງພັກ-ກົດໝາຍຂອງລັດ;
3. ພະນັກງານ, ສະມາຊິກພັກ, ຄູ-ອາຈານ ຕ້ອງຍົກສູງສະຕິລະວັງຕົວການເສບຂ່າວ, ກົດໄລ, ກົດແຊ ທາງສື່ສັງຄົມອອນລາຍ ແລະ ການເສບຂ່າວຕ່າງໆ ບໍ່ທັນຮູ້ຂໍ້ມູນຄວາມເປັນຈິງ ເດັດຂາດບໍ່ໃຫ້ເອົາລົງສື່ສັງຄົມອອນລາຍ;

สแกนด้วย CamScanner

4. ສືບຕໍ່ຕິດຕາມການເຄື່ອນໄຫວບັນດາໂຄງການ NGO, ມູນນິທິ ທີ່ເຂົ້າມາຊ່ວຍເຫຼືອ ໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ທີ່ກ່ຽວຂ້ອງກັບພາກສ່ວນຂອງຕົນ ໃຫ້ຕິດຕາມຢ່າງໃກ້ຊິດ.

5. ສຳລັບບັນດາມະຫາວິທະຍາໄລແຫ່ງຊາດ, ສະຖາບັນການສຶກສາ ແລະ ກິລາ, ວິທະຍາໄລ, ໂຮງຮຽນ, ວິສາຫະກິດ, ສູນ ໃຫ້ຈັດຕັ້ງຫນ່ວຍປະຈຳການປ້ອງກັນທີ່ຕັ້ງສຳນັກງານຫ້ອງການຂອງຕົນ ຈຳນວນພົນ 05 ຄົນຂຶ້ນໄປຕະຫລອດ 24 ຊົ່ວໂມງ.

6. ສຳລັບບັນດາ ຫ້ອງການ, ກົມ, ສຳນັກພິມສຶກສາ ແລະ ກິລາ ແລະ ສູນ ທີ່ຂຶ້ນກັບສຳນັກງານກະຊວງ ສສກ ແມ່ນມອບໃຫ້ ຕຳຫລວດປ້ອງກັນທີ່ຕັ້ງສຳນັກງານກະຊວງ ສສກ ແລະ ບໍລິສັດ ຮັກສາຄວາມປອດໄພ ນະຄອນຫລວງ ປ້ອງກັນເວນຍາມຕະຫລອດ 24 ຊົ່ວໂມງ.

7, ມອບໃຫ້ແຕ່ລະພາກສ່ວນສ້າງເງື່ອນໄຂອຳນວຍຄວາມສະດວກການນຳໃຊ້ງົບປະມານການເຄື່ອນໄຫວວຽກງານປ້ອງກັນທີ່ຕັ້ງ ຕາມເງື່ອນໄຂທີ່ເໝາະສົມ;

8, ຖ້າມີສະພາບເກີດຂຶ້ນໃຫ້ສັງລວມຂໍ້ມູນລາຍງານມາຍັງ ພະແນກປ້ອງກັນພັກ-ພະນັກງານ ແລະ ປ້ອງກັນພາຍໃນກົມຈັດຕັ້ງ ກະຊວງສຶກສາທິການ ແລະ ກິລາ ຮັບຊາບຮີບດ່ວນ ແລະ ຈຶ່ງເຮັດບົດລາຍງານຕາມວັນເວລາອັນຄວນ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງບັນດາສະຫາຍ ເພື່ອຊາບ ແລະ ໃຫ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຫົວໜ້າກົມ**

ປອ. ຕູດາວັນ ໜໍ່ເມືອງເສດ

- **ສ/ຫ: ຄຳຕຸ່ນ ຄຳພາວັນ 020 29497544.**
- **ສ/ຫ: ສີສະຫວາດ ບຸນທິສານ 020 52126406.**

สแกนด้วย CamScanner